ມູນນິທິ ອະນຸລັກ ສັດປ່າ ລາວ

## 2026-2030

# ແຜນຍຸດທະສາດ



# ວິໄສທັດ & ພາລະກິດ



## ວິໄສທັດ

ລາວເປັນປະເທດທີ່ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນທີ່ໄດ້ຮັບການປົກປ້ອງ, ສະຫວັດດີການສັດໄດ້ຮັບຄວາມເຄົາລົບ ແລະ ການອະນຸລັກເປັນທີ່ຍອມຮັບວ່າເປັນສ່ວນໜຶ່ງຂອງເອກະລັກປະຈຳຊາດ

## ພາລະກິດ

ພາລະກິດຂອງພວກເຮົາແມ່ນເພື່ອປົກປັກຮັກສາສັດປ່າ ໂດຍການແກ້ໄຂບັນຫາການຄ້າສັດປ່າທີ່ຜິດກົດໝາຍຜ່ານການສຶກສາ, ການປູກຈິດສຳນຶກ ແລະ ການບັງຄັບໃຊ້ກົດໝາຍ. ພວກເຮົາເຮັດວຽກຮ່ວມກັບບັນດາອົງການຈັດຕັ້ງຕ່າງໆ ເພື່ອສະກັດກັ້ນການສະແຫວງຫາຜົນປະໂຫຍດສ່ວນຕົວ ພ້ອມທັງຊ່ວຍເຫຼືອ, ບຳບັດ-ຟື້ນຟູ ແລະ ປ່ອຍສັດປ່າທີ່ໄດ້ຮັບຜົນກະທົບ. ຜ່ານການສ້າງຂີດຄວາມສາມາດ, ການເຂົ້າເຖິງ ແລະ ການເຮັດວຽກຮ່ວມກັນ ພວກເຮົາມີຈຸດປະສົງ ເພື່ອສ້າງການປ່ຽນແປງທີ່ຍືນຍົງໃຫ້ກັບສັດປ່າ ແລະ ຊຸມຊົນ.

# ຈາກຄວາມຈຳເປັນທີ່ຕ້ອງປະຕິບັດສູ່ໂອກາດ



ໃນ ປີ 2023 LCTW ໄດ້ຮັບແຈ້ງການໃຫ້ຍົກຍ້າຍສູນອອກຈາກສະຖານທີ່ເດີມຂອງພວກເຮົາ ແຕ່ກໍ່ຖືວ່າເປັນໂອກາດທ້າທາຍຄັ້ງໜຶ່ງໃນຊີວິດທີ່ຈະຕ້ອງໄດ້ສ້າງສະຖານທີ່ແຫ່ງໃໝ່ທີ່ສອດຄ່ອງກັບພາລະກິດຂອງພວກເຮົາຢ່າງແທ້ຈິງ. ການຍົກຍ້າຍສູນຂອງພວກເຮົາຄັ້ງນີ້ເຮັດໃຫ້ພວກເຮົາມີໂອກາດຄິດຄືນໃໝ່ກ່ຽວກັບການອະນຸລັກໃນລາວ: ລວມເອົາການສຶກສາ, ການກູ້ໄພ, ການປົກປ້ອງ ແລະ ການຄົ້ນຄວ້າເຂົ້າໃນຮູບແບບທີ່ເປັນເອກະພາບ ແລະ ຮອບດ້ານ. .

**ເດືອນ ມັງກອນ ປີ 2023**
ພວກເຮົາໄດ້ຮັບແຈ້ງການໃຫ້ຍົກຍ້າຍສູນ

**ເດືອນ ມີນາ ປີ 2023**
ຍົກຍ້າຍຊ້າງ (ແກ້ວຄູນ) ແລະ ໄດ້ຈົດທະບຽນເປັນອົງການ NGO ໃນສະຫະລັດອາເມລິກາ ຢ່າງເປັນທາງການ

**ເດືອນ ພຶດສະພາ ປີ 2023**
ໄດ້ລົງນາມເນື້ອທີ່ດິນ 15 ເຮັກຕາໃນສັນຍາ 45 ປີ

**ເດືອນ ມິຖຸນາ ປີ 2023**
ກວດຫາພະຍາດ ແລະ ເຮັດໝັນລີງ 114 ໂຕ

**ເດືອນ ສິງຫາ ປີ 2023**
ບຸກເບີກພື້ນທີ່ ແລະ ປ່ອຍລີງກຸ່ມທຳອິດສູ່ທຳມະຊາດ

**ເດືອນ ກັນຍາ ປີ 2023**
ປ່ອຍລີງກຸ່ມທີສອງສູ່ທຳມະຊາດ

**ເດືອນ ຕຸລາ ປີ 2023**
ທີມງານໂຍທາສະຖານທີ່ເລີ່ມໄປຢູ່ສູນໃໝ່ເພື່ອສ້າງຄອກສັດ ແລະ ທາງຍ່າງ

**ເດືອນ ພະຈິກ ປີ 2023**
ຍົກຍ້າຍສັດທຳອິດໄປສູນໃໝ່

**ເດືອນມັງກອນ ປີ 2024**
ຜູ້ຮັບເໝົາເລີ່ມກໍ່ສ້າງຄອກສັດ ແລະ ເຮືອນພັກພະນັກງານ

**ເດືອນ ເມສາ ປີ 2024**
ຍົກຍ້າຍໝີ 21 ໂຕ ໄປສູນໃໝ່

**ເດືອນ ມິຖຸນາ ປີ 2024**
ຍົກຍ້າຍແຂ້ຈຳນວນ 76 ໂຕ ໄປຍັງສູນໃໝ່

**ເດືອນ ກໍລະກົດ ປີ 2024**
ຍົກຍ້າຍສັດ ແລະ ພະນັກງານທຸກຄົນໄປຍັງສູນໃໝ່ສຳເລັດ



# ບຸລິມະສິດດ້ານຍຸດທະສາດ

**ບຸລິມະສິດຂອງພວກເຮົາເຊື່ອມຕໍ່ກັນເປັນວົງຈອນ: ການສຶກສາຂັບເຄື່ອນການປ້ອງກັນ, ການປ້ອງກັນຫຼຸດຜ່ອນການຊ່ວຍເຫຼືອ, ການຊ່ວຍເຫຼືອໃຫ້ຂໍ້ມູນແກ່ການຄົ້ນຄວ້າ ແລະ ການຄົ້ນຄວ້າຊ່ວຍເສີມຂະຫຍາຍການສຶກສາໃນອະນາຄົດ — ແຕ່ລະພາກສ່ວນຈະເສີມສ້າງຄວາມເຂັ້ມແຂງຕໍ່ໄປ ເພື່ອໃຫ້ບັນລຸຜົນຕໍ່ການອະນຸລັກທີ່ຍືນຍົງ.**

ໂຄງການຂະຫຍາຍພັນສັດ ເພື່ອການອະນຸລັກ

ການສຶກສາ ແລະ ການມີສ່ວນຮ່ວມ




ສຸຂະພາບໜຶ່ງດຽວ

ການຕ້ານການຄ້າສັດປ່າທີ່ຜິດກົດໝາຍ

ການຄົ້ນຄວ້າ ແລະ ປົກປ້ອງປ່າໄມ້

ການກູ້ໄພ, ບຳບັດ-ຟື້ນຟູ ແລະ ປ່ອຍ



# ການສຶກສາ ແລະ ການມີສ່ວນຮ່ວມ



**ການສຶກສາຄືຫົວໃຈຫຼັກຂອງວິໄສທັດຂອງສູນ LCTW. ພວກເຮົາມີຈຸດປະສົງຈະສ້າງແຮງບັນດານໃຈໃຫ້ແກ່ຜູ້ນຳດ້ານການອະນຸລັກລຸ້ນຕໍ່ໄປ ແລະ ເຊື່ອມໂຍງກັບຊຸມຊົນໃຫ້ຮັບຮູ້ເຖິງຄຸນຄ່າຂອງສັດປ່າ ຄຽງຄູ່ໄປກັບການລົງທຶນໃນການພັດທະນາບຸກຄະລາກອນຂອງພວກເຮົາ.**

- ໃຫ້ປະສົບການກ່ຽວກັບການເບິ່ງຊົມສັດປ່າ, ທົວ ແລະ ການເຮັດກິດຈະກຳເສີມສ້າງພຶດຕິກຳສັດປ່າແກ່ແຂກຜູ້ມາຢ້ຽມຊົມ.
- ສະໜັບສະໜູນການຄົ້ນຄວ້າໃຫ້ມີປະສິດທິພາບ ແລະ ປະສົບຄວາມສຳເລັດໃນດ້ານໂຄງການການສຶກສາ.
- ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນທ້ອງຖິ່ນດ້ວຍສື່ອະນຸລັກທີ່ສາມາດເຂົ້າເຖິງໄດ້ ແລະ ບໍ່ແມ່ນດິຈິຕອນ ເຊິ່ງອອກແບບມາ ເພື່ອແບ່ງປັນຄວາມຮູ້ ແລະ ເປັນແຮງບັນດານໃຈໃນການປົກປ້ອງສັດປ່າ.
- ເພີ່ມທະວີການເຂົ້າເຖິງດິຈິຕອນຜ່ານສື່ອອນໄລກ່ຽວກັບຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ກົດໝາຍວ່າດ້ວຍສັດປ່າ.
- ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ, ເຈົ້າໜ້າທີ່ປ່າໄມ້, ນັກຮຽນ ແລະ ອື່ນໆ.
- ພັດທະນາສູນສຶກສາສະເພາະທີ່ມີຫ້ອງຮຽນ, ໂຮງລະຄອນ, ປ້າຍອະທິບາຍ, ພື້ນທີ່ລົງປະຕິບັດຕົວຈິງ, ພິພິທະພັນປະຫວັດສາດທຳມະຊາດສັດປ່າ.
- ເສີມສ້າງ ແລະ ຂະຫຍາຍການຮ່ວມມືກັບບັນດາສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.



# ການຕ້ານການຄ້າສັດປ່າທີ່ຜິດກົດໝາຍ



**LCTW ເປີດສາຍດ່ວນຊ່ວຍເຫຼືອສັດປ່າ (1601) ພຽງສາຍດຽວພາຍໃນປະເທດ ເຊິ່ງເປັນເຄື່ອງມືທີ່ສຳຄັນໃນການຕ້ານການຄ້າສັດປ່າທີ່ຜິດກົດໝາຍ.**

- ສືບຕໍ່ເສີມຂະຫຍາຍຄວາມຮັບຮູ້ກ່ຽວກັບສາຍດ່ວນໃນທົ່ວປະເທດ.
- ເສີມສ້າງຖານຂໍ້ມູນອາຊະຍາກຳສັດປ່າຂອງພວກເຮົາ ແລະ ເຜີຍແຜ່ຜົນການຄົ້ນພົບປະຈຳປີ
- ສືບຕໍ່ເຮັດວຽກຮ່ວມກັບເຈົ້າໜ້າທີ່ປ່າໄມ້ກ່ຽວກັບການຍຶດເອົາສັດປ່າ ພ້ອມທັງສະໜັບສະໜູນ ແລະ ຝຶກອົບຮົມໃຫ້ເຈົ້າໜ້າທີ່ມີຄວາມຮັບຜິດຊອບທີ່ເຂັ້ມງວດຂຶ້ນ.
- ສະໜັບສະໜູນການພັດທະນາ ແລະ ເສີມສ້າງກົດໝາຍວ່າດ້ວຍການປົກປ້ອງສັດປ່າໃນລາວໃຫ້ມີຄວາມເຂັ້ມແຂງ ໂດຍຜ່ານການມີສ່ວນຮ່ວມໃນກຸ່ມເຮັດວຽກດ້ານນະໂຍບາຍ ແລະ ການຮ່ວມມືໃນການສະໜັບສະໜູນນະໂຍບາຍກັບອົງການຈັດຕັ້ງອື່ນໆທີ່ສຸມໃສ່ການຄ້າສັດປ່າທີ່ຜິດກົດໝາຍ.
- ສືບຕໍ່ຮ່ວມມືກັບບັນດາອົງການອະນຸລັກ ແລະ ອົງການທີ່ບໍ່ສະແຫວງຫາຜົນກຳໄລ ເພື່ອນຳສະເໜີວິໄສທັດ ແລະ ຍຸດທະສາດທີ່ເປັນເອກະພາບ ເພື່ອເພີ່ມແຮງກະແທກໃຫ້ສູງສຸດ.



# ການກູ້ໄພ, ບຳບັດ-ຟື້ນຟູ ແລະ ປ່ອຍ



**ວຽກງານຫຼັກຂອງ LCTW ຄືການຊ່ວຍເຫຼືອສັດປ່າພື້ນເມືອງລາວຈາກການຄ້າສັດປ່າທີ່ຜິດກົດໝາຍ. ຂັ້ນຕອນຕໍ່ໄປຄືການເສີມສ້າງຄວາມສາມາດຂອງພວກເຮົາ ເພື່ອໃຫ້ໝັ້ນໃຈວ່າສັດທຸກໂຕມີໂອກາດໄດ້ຮັບອິດສະຫຼະພາບ.**

- ຂະຫຍາຍສະຖານທີ່ບຳບັດ-ຟື້ນຟູ ລວມທັງຫ້ອງພັກປິ່ນປົວໃນໂຮງໝໍ, ຫ້ອງລ້ຽງດູສັດປ່ານ້ອຍ ແລະ ຄອກທີ່ຢູ່ໃນປ່າ ເພື່ອການທົດລອງປ່ອຍສັດ.
- ເພີ່ມການຕິດຕາມສັດ ຫຼັງການປ່ອຍ ໂດຍໃຊ້ປອກຄໍ GPS, ກ້ອງດັກລັກຖ່າຍ ແລະ ລະບົບສົ່ງຂໍ້ມູນທາງວິທະຍຸ.
- ບັນທຶກ ແລະ ແບ່ງປັນຜົນໄດ້ຮັບ ເພື່ອສ້າງເປັນຕົວແບບແຫ່ງຊາດໃຫ້ແກ່ໂຄງການປ່ອຍສັດປ່າ.
- ຍັງຄົງມຸ່ງໝັ້ນທີ່ຈະສ້າງສາຍພົວພັນ ແລະ ຄວາມໄວ້ວາງໃຈກັບໜ່ວຍງານລັດຖະບານ ແລະ ພົນລະເມືອງທ້ອງຖິ່ນ ເພື່ອເພີ່ມໂອກາດໃນການຊ່ວຍເຫຼືອສັດປ່າ.



# ການຄົ້ນຄວ້າ ແລະ ປົກປ້ອງປ່າໄມ້



**LCTW ມີທີ່ຕັ້ງຢູ່ໃນເຂດອຸທິຍານແຫ່ງຊາດພູເຂົາຄວາຍ ເຊິ່ງເປັນສະຖານທີ່ເໝາະສົມທີ່ສຸດສຳລັບປ່ອຍສັດປ່າທີ່ໄດ້ຮັບການບຳບັດ-ຟື້ນຟູ.**

- ດຳເນີນການສຳຫຼວດ ໂດຍການຕັ້ງກ້ອງດັກລັກຖ່າຍ ເພື່ອຕິດຕາມຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ
- ດຳເນີນການສຳຫຼວດຂັ້ນພື້ນຖານກ່ຽວກັບຄວາມຫຼາກຫຼາຍຂອງຕົ້ນໄມ້ ແລະ ຖິ່ນທີ່ຢູ່ອາໄສຂອງສັດປ່າ
- ສ້າງຕັ້ງໂຄງການໜ່ວຍລາດຕະເວນປ່າໄມ້ ເພື່ອປົກປ້ອງພື້ນທີ່ປ່ອຍສັດປ່າ ແລະ ເພື່ອຮັບປະກັນໃຫ້ສັດປ່າທີ່ປ່ອຍນັ້ນມີຊີວິດຢູ່ລອດໃນໄລຍະຍາວ.
- ຮ່ວມມືກັບນັກສຶກສາຜູ້ທີ່ໄດ້ຮັບປະລິນຍາໃນການດຳເນີນໂຄງການຄົ້ນຄວ້າທີ່ຈະສົ່ງເສີມຄວາມຮູ້ດ້ານການອະນຸລັກ, ການມີສ່ວນຮ່ວມຂອງຊຸມຊົນ, ປະສິດທິພາບໃນການລິເລີ່ມດ້ານການສຶກສາ, ຄວາມສຳເລັດໃນການປ່ອຍສັດ ແລະ ສຸຂະພາບສັດ.



# ສຸຂະພາບໜຶ່ງດຽວ



**ສຸຂະພາບຂອງສັດປ່າ, ຄົນ ແລະ ລະບົບນິເວດມີຄວາມເຊື່ອມໂຍງກັນ. ສະນັ້ນ, LCTW ຈຶ່ງລວມເອົາການເຝົ້າລະວັງພະຍາດສັດປ່າເຂົ້າໃນວຽກງານການອະນຸລັກຂອງຕົນ**

- ສືບຕໍ່ໃຫ້ການຮ່ວມມືໃນການຄົ້ນຄວ້າພະຍາດຕິດຕໍ່ຈາກສັດສູ່ຄົນ ເຊັ່ນ: (ໄວຣັດໂຄໂຣນາ, ພະຍາດວັນນະໂລກ, ພະຍາດໄຂ້ຫວັດສັດປີກ, ພະຍາດເມລິອໍໂດຊິສ ແລະ ອື່ນໆ).
- ສ້າງລະບຽບການ ເພື່ອຮັບປະກັນຄວາມປອດໄພໃນການປ່ອຍສັດປ່າ.
- ສຳຫຼວດໃຫ້ການເບິ່ງແຍງຮັກສາດ້ານສັດຕະວະແພດໃນຊຸມຊົນທີ່ສອດຄ່ອງກັບເປົ້າໝາຍການອະນຸລັກ.
- ສ້າງການເຊື່ອມໂຍງແນວຄວາມຄິດສຸຂະພາບໜຶ່ງດຽວໃນການລິເລີ່ມການສຶກສາ ແລະ ການທ່ອງທ່ຽວຢູ່ທີ່ສູນຂອງພວກເຮົາ ແລະ ໃນລະຫວ່າງກິດຈະກຳເຜີຍແຜ່ຂໍ້ມູນໃນຊຸມຊົນ ເຊັ່ນ: (ການຢ້ຽມຊົມບ້ານ ແລະ ມຸມມອງການຮຽນຮູ້).
- ສືບຕໍ່ຕິດຕາມເຝົ້າລະວັງພະຍາດສຳລັບສັດທີ່ຊ່ວຍເຫຼືອມາທີ່ມີຄວາມສ່ຽງສູງ ແລະ ລວບລວມຂໍ້ມູນໄວ້ໃນຖານຂໍ້ມູນສາກົນ, ລະບົບຈັດການຂໍ້ມູນສັດຕະວິທະຍາ 360Species.



# ໂຄງການຂະຫຍາຍພັນສັດ ເພື່ອການອະນຸລັກ



**ພວກເຮົາກໍາລັງສ້າງຝູງສັດທີ່ມີຄວາມຮັບປະກັນ ແລະ ໂຄງການຂະຫຍາຍພັນສັດ ເພື່ອປ່ອຍສາຍພັນສັດທີ່ຖືກໄພຄຸກຄາມກັບຄືນສູ່ທໍາມະຊາດ.**

- ໂຄງການຂະຫຍາຍພັນສັດໃນປັດຈຸບັນລວມມີ: ແຂ້ພື້ນເມືອງລາວ, ເຕົ່າເພັດ, ເຕົ່າກົມ ແລະ ເຕົ່າສາມລ່ຽມກົ່ງ.
- ໃນອະນາຄົດອາດມີ: ທະນີ, ຄ່າງ ແລະ ກະຕ່າຍລາຍເສືອ ເຊິ່ງຄວາມສໍາເລັດໃນການຂະຫຍາຍພັນອາດສ້າງຄວາມຫວັງໃຫ້ກັບປະຊາກອນສັດປ່າ.
- ນໍາໃຊ້ສາຍພົວພັນທີ່ມີຢູ່ກັບອຸດສາຫະກໍາ, ອົງການທີ່ບໍ່ສະແຫວງຫາຜົນກໍາໄລ ແລະ ໜ່ວຍງານລັດ ເພື່ອສ້າງເຄືອຂ່າຍສະຖານທີ່ປ່ອຍສັດທີ່ປອດໄພ ແລະ ມີປະສິດທິພາບສໍາລັບໂຄງການປ່ອຍສັດ.



# ໝາກຜົນມາຮອດປັດຈຸບັນ

## ການສຶກສາ ແລະ ການມີສ່ວນຮ່ວມ

- ໄດ້ຝຶກອົບຮົມໃຫ້ເຈົ້າໜ້າທີ່ປ່າໄມ້ຫຼາຍກວ່າ 90 ຄົນ ແລະ ມີສ່ວນຮ່ວມກັບນັກຮຽນຫຼາຍກວ່າ 600 ຄົນ.
- ໄດ້ເຂົ້າເຖິງຜູ້ມາຢ້ຽມຊົມຫຼາຍກວ່າ 25,000 ຄົນ ຜ່ານໂຄງການ ແລະ ກິດຈະກຳຊຸມຊົນຕ່າງໆ.
- ໄດ້ຮ່ວມມືກັບແຫຼ່ງທ່ອງທ່ຽວນ້ຳປຽນຍໍລະປ່າ ເພື່ອເສີມຂະຫຍາຍການສຶກສາການທ່ອງທ່ຽວແບບອະນຸລັກ.
- ຈັດໂຄງການການສຶກສາລະດັບສາກົນ ເພື່ອຍົກສູງການປູກຈິດສຳນຶກກ່ຽວກັບສັດປ່າລາວ
- ໄດ້ມີສ່ວນຮ່ວມ ເພື່ອໃຫ້ຄວາມຊ່ຽວຊານໃນກອງປະຊຸມກ່ຽວກັບການອະນຸລັກລະດັບຊາດ ແລະ ສາກົນຫຼາຍກວ່າ 25 ຄັ້ງ

## ການກູ້ໄພ, ບຳບັດ-ຟື້ນຟູ ແລະ ປ່ອຍ

- ໄດ້ກອບກູ້ສັດປ່າຫຼາຍກວ່າ 450 ໂຕ ເຊັ່ນ: ທະນີ, ລິ່ນ, ເຕົ່ານ້ຳ, ເຕົ່າບົກ, ຄ່າງ, ລີງລົມ, ເຫງັ້ນ ແລະ ສັດອື່ນໆອີກຫຼາຍຊະນິດ
- ໄດ້ປ່ອຍສັດຄືນສູ່ທຳມະຊາດຫຼາຍກວ່າ 350 ໂຕ ເຊັ່ນ: ລິ່ນ, ເຕົ່ານ້ຳ, ເຕົ່າບົກ, ຄ່າງ, ລີງລົມ, ເຫງັ້ນ ແລະ ສັດອື່ນໆ
- ໄດ້ດຳເນີນການປະເມີນສຸຂະພາບຂອງສັດທີ່ກອບກູ້ມາ, ສ້າງຖານຂໍ້ມູນລະດັບຊາດທີ່ສະໜັບສະໜູນການບຳບັດ-ຟື້ນຟູ ແລະ ປ່ອຍສັດ ໂດຍອີງໃສ່ຫຼັກຖານ
- ໄດ້ມີການພັດທະນາ ແລະ ນຳໃຊ້ລະບຽບການບຳບັດ-ຟື້ນຟູສຸຂະພາບສັດ

## ການຕ້ານການຄ້າສັດປ່າທີ່ຜິດກົດໝາຍ

- ໄດ້ຮັບ, ປະເມີນຜົນ ແລະ ບັນທຶກຂໍ້ມູນເບາະແສຫຼາຍກວ່າ 850 ກໍລະນີ
- ໄດ້ເຂົ້າຮ່ວມໃນກຸ່ມເຮັດວຽກ 15.7 ແລະ ຄະນະສະເພາະກິດແຫ່ງຊາດ
- ສືບຕໍ່ປະເມີນ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສັດປ່າຢ່າງມີປະສິດທິພາບ ໂດຍຜ່ານການຮ່ວມມືກັບລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO)

## ການຄົ້ນຄວ້າ ແລະ ປົກປ້ອງປ່າໄມ້

- ມີສ່ວນຮ່ວມຢ່າງຫ້າວຫັນໃນລະບົບຈັດການຂໍ້ມູນສັດຕະວິທະຍາ Species 360, ປະກອບສ່ວນເຂົ້າໃນການຮ່ວມມືດ້ານສຸຂະພາບສັດປ່າທົ່ວໂລກ ແລະ ກຳນົດຄ່າອ້າງອີງສຳລັບຊະນິດສັດທີ່ຍັງບໍ່ທັນໄດ້ຮັບການສຶກສາພ້ອມທັງບັນທຶກຂໍ້ມູນທີ່ສຳຄັນກ່ຽວກັບການລ້ຽງສັດ, ພຶດຕິກຳ, ສະຖານທີ່ກູ້ໄພ ແລະ ຂໍ້ມູນສຳຄັນອື່ນໆ ເພື່ອສະໜັບສະໜູນວຽກງານໃນການອະນຸລັກ ແລະ ການລ້ຽງດູສັດ.
- ນຳສະເໜີຜົນການຄົ້ນຄວ້າ ແລະ ຜົນການຄົ້ນພົບການອະນຸລັກໃນກອງປະຊຸມລະດັບຊາດ ແລະ ສາກົນ ຜ່ານໂປສເຕີ, ການສົນທະນາ ແລະ ປຶກສາຫາລືເປັນໝູ່ຄະນະ

## ສຸຂະພາບໜຶ່ງດຽວ

- ກວດພົບກໍລະນີທຳອິດຂອງພະຍາດໄຂ້ຫວັດສັດປີກໃນສັດລ້ຽງລູກດ້ວຍນ້ຳນົມໃນລາວ
- ກວດພົບວັນນະໂລກໃນລີງ
- ກວດພົບພະຍາດເມລີອໍໂດຊີສໃນສັດລ້ຽງລູກດ້ວຍນ້ຳນົມຫຼາຍຊະນິດ
- ກວດພົບເຊື້ອພະຍາດ Parvo ໃນເຫງັ້ນຈຳນວນ 24 ໂຕ ທີ່ເຈົ້າໜ້າທີ່ຍຶດມາ
- ກວດເຊັກສຸຂະພາບສັດທຸກໂຕທີ່ໄດ້ກອບກູ້ມາ ເພື່ອຊ່ວຍສ້າງຖານຂໍ້ມູນພື້ນຖານກ່ຽວກັບການແຜ່ລະບາດຂອງພະຍາດໃນສັດປ່າລາວທີ່ຖືກລັກລອບຄ້າ-ຂາຍ
- ນຳໃຊ້ລະບົບຈັດການຂໍ້ມູນສັດຕະວິທະຍາ Species 360 ເພື່ອແບ່ງປັນ ແລະ ເຮັດວຽກຮ່ວມກັບບັນດາອົງການຕ່າງໆທົ່ວໂລກ.

## ໂຄງການຂະຫຍາຍພັນສັດ ເພື່ອການອະນຸລັກ

- ພວກເຮົາໄດ້ກວດກຳມະພັນຂອງແຂ້ຈຳນວນ 92 ໂຕ ເພື່ອກຳນົດຄວາມບໍລິສຸດທາງກຳມະພັນຂອງປະຊາກອນແຂ້ພື້ນເມືອງທີ່ພວກເຮົາລ້ຽງໄວ້ໃນສູນນີ້
- ເພາະພັນແຂ້ພື້ນເມືອງລາວສຳເລັດ ແລະ ໄດ້ລູກແຂ້ນ້ອຍທັງໝົດ 187 ໂຕ
- ເພາະພັນເຕົ່າເພັດສຳເລັດ ແລະ ໄດ້ລູກເຕົ່ານ້ອຍທັງໝົດ 23 ໂຕ ແລະ ມີການປ່ອຍສູ່ທຳມະຊາດ 18 ໂຕ
- ເພາະພັນໄດ້ລູກເຕົ່າກົມ 20 ໂຕ ແລະ ສຳເລັດປ່ອຍສູ່ທຳມະຊາດ.








# ຈົ່ງພ້ອມກັນ

## ເພື່ອສັດປ່າລາວ

LCTW ກຳລັງຢູ່ໃນຈຸດປ່ຽນ
ໃນສູນແຫ່ງໃໝ່ທີ່ມີພື້ນທີ່ສຳລັບການສຶກສາ, ການຂະຫຍາຍຕົວ ແລະ ການມີສ່ວນຮ່ວມຂອງຊຸມຊົນຫຼາຍຂຶ້ນ ພວກເຮົາມີທ່າທີທີ່ຈະກາຍເປັນຜູ້ນຳດ້ານການອະນຸລັກໃນພາກພື້ນ.

ວິໄສທັດນີ້ຈະເປັນໄປໄດ້ກໍ່ຕໍ່ເມື່ອໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນຂອງພວກເຮົາ. ພວກເຮົາຈົ່ງພ້ອມກັນຊ່ວຍຊີວິດສັດປ່າລາວ, ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ສ້າງອະນາຄົດທີ່ໝັ້ນຄົງໃຫ້ກັບຄວາມຫຼາກຫຼາຍທາງດ້ານຊີວະນາໆພັນຂອງລາວ.



# ຜູ້ສະໜັບສະໜູນ ແລະ ຄູ່ຮ່ວມງານຂອງພວກເຮົາ

LCTW
LAO CONSERVATION TRUST for WILDLIFE

NCX | HONDA

Nam Pien Yorla Pa
The protected forestry area along nam pien river

re:wild

WCS

ສະຫະພາບ ເອີຣົບ
European Union

EXO Foundation

CINCINNATI ZOO & BOTANICAL GARDEN

ASSOCIATION OF ZOO VETERINARY TECHNICIANS AZVT

AAZK GREATER CINCINNATI CHAPTER

ASIA WILD

Mandai NATURE

ANIMAL SURVIVAL INTERNATIONAL

GLOBAL INITIATIVE

RESILIENCE FUND

IUCN • Species Survival Commission
Crocodile Specialist Group

HKBWS 香港觀鳥會

VIS

Hertfordshire ZOO
at Paradise Wildlife Park

KANSAS CITY ZOO AAZK
AMERICAN ASSOCIATION OF ZOO KEEPERS

MEKONG GARAGE BAR

ASAP

IUCN

The Shed Vientiane

BOART LONGYEAR

DODO
FUNDACJA ZOO WROCŁAW

AAZK
AMERICAN ASSOCIATION of ZOOKEEPERS
Greater Cleveland CHAPTER

IUCN PRIMATES
SECTION ON SMALL APES

WWF

FREE THE BEARS

British Embassy
Vientiane

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

Australian Aid

IRD
Institut de Recherche pour le Développement
FRANCE

Association Anoulak

DES ELEPHANTS & DES HOMMES

elephant conservation center

# THANK YOU



Your support makes our work possible. Together, we can give Laos' wildlife a future.

## Contact Us On Any Platform


**WhatsApp:**
+856 20 94 139 533

**Email :**
jeremy@lctwildlife.org

**Website:**
lctwildlife.org

@lctwildlife

@lctwildlife


## Support LCTW Today!

patreon.com/lctwildlife

PayPal Donation